ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------===000===----------

ສານປະຊາຊົນພາກເໜືອ

ຄະນະສານແພ່ງ ເລກທີ 005/ອທ.ພ

ຂັ້ນອຸທອນ ລົງວັນທີ 28 ຕຸລາ 2016

# ຄຳສັ່ງອາຍັດຊັບ

**ຄະນະສານແພ່ງຂັ້ນອຸທອນຂອງສານປະຊາຊົນພາກເໜືອ ຊຶ່ງປະກອບດ້ວຍ:**

| | | |
|---|---|---|
| | ທ່ານ ບົວລະວັນ ເທບພະວົງ | ປະທານ |
| | ທ່ານ ນາງ ດາວອະໄລ ກຸນລະວຸດ | ຄະນະ |
| | ທ່ານ ນາງ ສີອຳພອນ ຈິດຕະວົງສາ | ຄະນະ |
| ນັ່ງພ້ອມດ້ວຍ | ທ່ານ ບຸນມາ ຮັກຫຼ້າມາລາວົງ | ຈ່າສານ |

ໄດ້ເປີດປະຊຸມສານຂຶ້ນໃນວັນທີ 28 ຕຸລາ 2016, ເວລາ 8 ໂມງ 30 ນາທີ, ຢູ່ທີ່ຫ້ອງປະຊຸມສານຂອງສານປະຊາຊົນພາກເໜືອ ທີ່ແຂວງຫຼວງພະບາງ ເພື່ອພິຈາລະນາຄຳສັ່ງອາຍັດຊັບ ເລກທີ 008/ຂຕ.ພ, ລົງວັນທີ 10 ສິງຫາ 2016 ຂອງສານປະຊາຊົນແຂວງຫຼວງພະບາງ ໃນສຳນວນຄະດີແພ່ງ ເລກທີ 17/ຂຕ.ພ ລົງວັນທີ 11 ທັນວາ 2015 ຂອງສານປະຊາຊົນແຂວງຫຼວງພະບາງ.

## ລະຫວ່າງ

**ທ້າວ ເພັດຈຳພອນ,** ອາຍຸ 52 ປີ, ສັນຊາດລາວ, ອາຊີບນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ 02, ເຮືອນເລກທີ 22, ບ້ານຊຽງທອງ, ເມືອງຫຼວງພະບາງ, ແຂວງຫຼວງພະບາງ (ໂຈດ);

**ນາງ ບຸນທັນ,** ອາຍຸ 58 ປີ, ສັນຊາດລາວ, ອາຊີບຄ້າຂາຍ, ປັດຈຸບັນຢູ່ໜ່ວຍ 05, ເຮືອນເລກທີ 90, ບ້ານສັງຄະໂລກ, ເມືອງຫຼວງພະບາງ, ແຂວງຫຼວງພະບາງ (ຈຳເລີຍ);

**ທ້າວ ບຸນທະວີ ຄໍລະຍົກ** (ທະນາຍຄວາມໂຈດ).

**ກ່ຽວເລື່ອງ: ທວງເອົາເງິນຄືນ.**

## ສານ

## ໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ອີງຕາມສິດ ແລະ ໜ້າທີ່ຂອງສານຕາມກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງປີ 2009;

ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012;

ໄດ້ແຈ້ງຄຳສັ່ງອາຍັດຊັບທີ່ນຳອອກມາພິຈາລະນາ ພ້ອມທັງແຈ້ງຊື່ ແລະ ນາມສະກຸນຂອງປະທານ, ຄະນະສານ, ຈ່າສານ ໃນທີ່ປະຊຸມສານແລ້ວ;

ໄດ້ຄົ້ນຄວ້າບັນດາເອກະສານຂໍ້ມູນຫຼັກຖານກ່ຽວກັບສຳນວນຄຳສັ່ງອາຍັດຊັບເລື່ອງນີ້ຢ່າງລະອຽດຖີ່ຖ້ວນແລ້ວ;

ເຫັນຄຳຕົກລົງບໍ່ຄັດຄ້ານ ສະບັບເລກທີ 330/ອຍກ.ພໜ, ລົງວັນທີ 14 ຕຸລາ 2016 ຂອງຫົວໜ້າອົງການໄອຍະການປະຊາຊົນພາກເໜືອ.

## ເນື້ອຄະດີ

ເຫັນຕາມເນື້ອໃນຄຳຮ້ອງຟ້ອງ ສະບັບລົງວັນທີ 20 ພະຈິກ 2015 ຂອງທ້າວ ເພັດຈຳພອນ (ໂຈດ) ໄດ້ອ້າງວ່າ: ໃນເບື້ອງຕົ້ນນາງ ບຸນທັນ (ຈຳເລີຍ) ໄດ້ມາສະເໜີຂາຍທີ່ດິນຢູ່ບ້ານສັງຄະໂລກ ຈຳນວນ ສອງຕອນ, ຈາກນັ້ນຕົນ ແລະ ທ້າວ ແສງວົງຈິດ ຍາງວິໄລ ຈຶ່ງໄດ້ຕົກລົງຊື້ທີ່ດິນນຳນາງ ບຸນທັນ (ຈຳເລີຍ) ຈຳນວນ ສອງຕອນ ຄື: ຕອນທີໜຶ່ງ ມີເນື້ອທີ່ 263 ຕາແມັດ ຕາມໃບຕາດິນ ສະບັບເລກທີ 217, ລົງວັນທີ 12 ກັນຍາ 2003 ອອກຊື່ນາງ ບຸນທັນ (ຈຳເລີຍ) ແລະ ຕອນທີສອງ ມີເນື້ອທີ່ 1 ເຮັກຕາ 5,868 ຕາແມັດ ຕາມໃບຕາດິນ ສະບັບເລກທີ 223, ລົງວັນທີ 12 ກັນຍາ 2003 ອອກຊື່ນາງ ບຸນທັນ (ຈຳເລີຍ)ໃນມູນຄ່າ 9,600,000 ບາດ ຕາມສັນຍາຊື້-ຂາຍທີ່ດິນ ສະບັບເລກທີ 01/ສຄລ, ລົງວັນທີ 8 ມັງກອນ 2012 ແລະ ໄດ້ຕົກລົງຈ່າຍເງິນເປັນສາມງວດຄື: ງວດທີໜຶ່ງ ຈ່າຍເງິນໃນວັນທີ 9 ມັງກອນ 2012 ຈຳນວນ 3,000,000 ບາດ; ງວດທີສອງ ຈ່າຍເງິນໃນວັນທີ 1 ມັງກອນ 2013 ຈຳນວນ 3,000,000 ບາດ; ງວດທີສາມ ຈ່າຍເງິນໃນວັນທີ 1 ມັງກອນ 2014 ຈຳນວນ 3,600,000 ບາດ. ພາຍຫຼັງທີ່ໄດ້ຈ່າຍເງິນໃຫ້ໝົດແລ້ວນາງ ບຸນທັນ (ຈຳເລີຍ) ກໍໄດ້ໂອນໃບຕາດິນອອກເປັນຊື່ທ້າວ ເພັດຈຳພອນ ຂຸນດາລາ + ທ້າວ ແສງວົງຈິດ ຍາງວິໄລ; ຫຼັງຈາກນັ້ນ ພວກຕົນກໍໄດ້ເຂົ້າໄປທຳການບຸກເບີກເອົາດິນມາຖົມ ແລະ ປັບໜ້າດິນໃຫ້ພຽງຈຳນວນໜຶ່ງ ແລ້ວກໍໄດ້ສະເໜີໃຫ້ພະນັກງານທີ່ດິນ ລົງໄປວັດແທກຂອບເຂດແດນຂອງດິນ ຈຶ່ງຮູ້ວ່າເນື້ອທີ່ດິນຕອນທີສອງ ຕາມໃບຕາດິນ ເລກທີ 223, ລົງວັນທີ 12 ກັນຍາ 2003 ມີເນື້ອທີ່ຕົວຈິງພຽງແຕ່ 5,868 ຕາແມັດເທົ່ານັ້ນ ຕາມໃບຢັ້ງຢືນ ສະບັບເລກທີ 246/ຫຊສ.ຫຼບ, ລົງວັນທີ 11 ເມສາ 2015 ຂອງຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຫຼວງພະບາງ; ຫຼັງຈາກນັ້ນພວກຕົນກໍໄດ້ເຂົ້າໄປຫານາງ ບຸນທັນ (ຈຳເລີຍ) ເພື່ອແຈ້ງໃຫ້ຜູ້ກ່ຽວຮັບຮູ້ວ່າເນື້ອທີ່ດິນຕົວຈິງຂອງດິນຕອນທີສອງ ມີພຽງແຕ່ 5,868 ຕາແມັດເທົ່ານັ້ນ ແລະ ສະເໜີໃຫ້ນາງ ບຸນທັນ (ຈຳເລີຍ) ສົ່ງເງິນຄ່າດິນໃນເນື້ອທີ່ 1 ເຮັກຕາ ທີ່ຂາດຫາຍໄປນັ້ນ ໂດຍຄິດໄລ່ເປັນເງິນ ຈຳນວນ 5,952,055 ບາດ ຄືນໃຫ້ແກ່ພວກຕົນ ແຕ່ນາງ ບຸນທັນ (ຈຳເລີຍ) ປະຕິເສດບໍ່ຍອມສົ່ງເງິນຄືນໃຫ້ແກ່ພວກຕົນ; ເມື່ອເຫດການເປັນແນວນັ້ນພວກຕົນຈຶ່ງໄດ້ຂຽນຄຳຮ້ອງຟ້ອງ ຂຶ້ນມາຍັງສານປະຊາຊົນແຂວງຫຼວງພະບາງ ເພື່ອທວງໃຫ້ນາງ ບຸນທັນ (ຈຳເລີຍ) ສົ່ງເງິນຄ່າດິນ ຈຳນວນ 5,952,055 ບາດ ຄືນໃຫ້ແກ່ພວກຕົນ.

ເຫັນຕາມເນື້ອໃນຄຳແກ້ຟ້ອງ ສະບັບລົງວັນທີ 10 ທັນວາ 2015 ຂອງນາງ ບຸນທັນ (ຈຳເລີຍ) ໄດ້ອ້າງເຫດຜົນວ່າ: ໃນເດືອນມັງກອນ 2012 ຕົນໄດ້ຕົກລົງຂາຍທີ່ດິນ ຈຳນວນສອງຕອນ ຕັ້ງຢູ່ບ້ານສັງຄະໂລກ ເມືອງຫຼວງພະບາງ ແຂວງຫຼວງພະບາງ ໃຫ້ແກ່ທ້າວ ເພັດຈຳພອນ (ໂຈດ) ຄື: ຕອນທີໜຶ່ງ ມີເນື້ອທີ່ 263 ຕາແມັດ ຕາມໃບຕາດິນ ສະບັບເລກທີ 217, ລົງວັນທີ 12 ກັນຍາ 2003 ອອກຊື່ນາງ ບຸນທັນ (ຈຳເລີຍ) ແລະ ຕອນທີສອງ ມີເນື້ອທີ່ 1 ເຮັກຕາ 5,868 ຕາແມັດ ຕາມໃບຕາດິນ ສະບັບເລກທີ 223, ລົງວັນທີ 12 ກັນຍາ 2003 ອອກຊື່ນາງ ບຸນທັນ (ຈຳເລີຍ) ໃນມູນຄ່າ 9,600,000 ບາດ ຈາກນັ້ນ ພວກຕົນກໍໄດ້ຕົກລົງເຮັດສັນຍາຊື້-ຂາຍນຳກັນ ໂດຍຖືກຕ້ອງຕາມກົດໝາຍ ແລະ ຜ່ານອຳນາດການປົກຄອງທຸກຂັ້ນ ຕາມສັນຍາການຊື້-ຂາຍທີ່ດິນ ສະບັບເລກທີ 01/ສຄລ, ລົງວັນທີ 8 ມັງກອນ 2012 ແລະ ທ້າວ ເພັດຈຳພອນ (ໂຈດ) ໄດ້ຈ່າຍເງິນຕາມສັນຍາຊື້-ຂາຍໝົດແລ້ວ ແລະ ໃບຕາດິນກໍໄດ້ໂອນເປັນກຳມະສິດຂອງຜູ້ຊື້ ອອກຊື່ທ້າວ ເພັດຈຳພອນ (ໂຈດ) ໝົດແລ້ວ, ສ່ວນການທີ່ທ້າວ ເພັດຈຳພອນ (ໂຈດ) ໄດ້ຮ້ອງຟ້ອງຕົນຂຶ້ນມາຍັງສານປະຊາຊົນແຂວງຫຼວງພະບາງ ເພື່ອໃຫ້ຕົນສົ່ງເງິນຄ່າທີ່ດິນຄືນຈຳນວນ 5,952,055 ບາດ ຊຶ່ງໄດ້ອ້າງວ່າ ທີ່ດິນຕອນທີສອງ ຕາມໃບຕາດິນ ເລກທີ 223, ລົງວັນທີ 12 ກັນຍາ 2003 ມີເນື້ອທີ່ຕົວຈິງພຽງແຕ່ 5,868 ຕາແມັດ ຂາດຫາຍໄປ 1 ເຮັກຕານັ້ນ ຕົນແມ່ນບໍ່ຮັບຮູ້ເນື່ອງຈາກວ່າ: ໃບຕາດິນທັງສອງສະບັບນັ້ນເປັນໃບຕາດິນແຂບຄຳ ຊຶ່ງແມ່ນອົງການລັດກໍຄືຫ້ອງການຄຸ້ມຄອງທີ່ດິນ ແລະ ເຮືອນ ເປັນ

ຜູ້ອອກໃຫ້, ກ່ອນຈະມີການຊື້-ຂາຍ ຜູ້ຊື້ກໍໄດ້ໄປກວດກາຂອບເຂດຂອງທີ່ດິນຕົວຈິງແລ້ວ ເພາະວ່າການຂາຍທີ່ດິນນັ້ນແມ່ນການຂາຍຍົກ (ຂາຍທັງສອງຕອນພ້ອມກັນ) ໂດຍບໍ່ໄດ້ຂາຍເປັນຕາແມັດ; ຖ້າວ່າເນື້ອທີ່ດິນຫາກບໍ່ຄົບຖ້ວນຕາມທີ່ທ້າວ ເພັດຈຳພອນ (ໂຈດ) ກ່າວອ້າງມານັ້ນ ຕົນກໍຈະຂາຍທີ່ດິນທັງສອງຕອນນັ້ນໃນລາຄາ 9,600,000 ບາດ ຄືເກົ່າ, ດັ່ງນັ້ນ ຕົນຈະບໍ່ຂໍສົ່ງເງິນຄືນໃຫ້ຜູ້ກ່ຽວເດັດຂາດ. ການທີ່ທ້າວ ເພັດຈຳພອນ (ໂຈດ) ໄດ້ຮ້ອງຟ້ອງທວງໃຫ້ຕົນສົ່ງເງິນຄ່າທີ່ດິນຄືນ ຈຳນວນ 5,952,055 ບາດນັ້ນ ເປັນການຄິດໄລ່ເອົາເອງ ໂດຍຄິດໄລ່ເປັນຕາແມັດ ສະນັ້ນ ຕົນຈຶ່ງໄດ້ສະເໜີໃຫ້ສານປະຊາຊົນແຂວງຫຼວງພະບາງ ພິຈາລະນາຕັດສິນໃຫ້ຄວາມເປັນທຳແກ່ຕົນດ້ວຍ ເນື່ອງຈາກວ່າ: ການຊື້-ຂາຍລະຫວ່າງຕົນກັບທ້າວ ເພັດຈຳພອນ (ໂຈດ) ແມ່ນເຮັດຂຶ້ນດ້ວຍຄວາມບໍລິສຸດໃຈຂອງທັງສອງຝ່າຍ ໂດຍຜ່ານອຳນາດການປົກຄອງທຸກຂັ້ນ ແລະ ຖືກຕ້ອງຕາມຫຼັກການຂອງກົດໝາຍທຸກຢ່າງ ໂດຍຜ່ານທີ່ດິນ ແລະ ທະບຽນສານ.

## ຮູບຄະດີ

ເຫັນຄຳສັ່ງອາຍັດຊັບ ສະບັບເລກທີ 008/ຂຕ.ພ, ລົງວັນທີ 10 ສິງຫາ 2016 ຂອງສານປະຊາຊົນແຂວງຫຼວງພະບາງ ບອກວ່າ: ອາຍັດຊັບທີ່ດິນ ແລະ ເຮືອນ ຕາມໃບທະບຽນທີ່ດິນ ເລກທີ 425, ໃບທີ 25, ລົງວັນທີ 10 ກຸມພາ 2015 ແຜນທີ່ດິນໃບທີ C196- 193/03 ຕອນດິນເລກທີ 102 ມີເນື້ອທີ່ 372 ຕາແມັດ ອອກຊື່ນາງ ບຸນທັນ ລັກປະສິດ ຕັ້ງຢູ່ໜ່ວຍ 12, ບ້ານສັງຄະໂລກ, ເມືອງຫຼວງພະບາງ, ແຂວງຫຼວງພະບາງ ແລະ ບັນຊີເງິນຝາກຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ສາຂາແຂວງຫຼວງພະບາງຄື: 1) ບັນຊີເລກທີ 052120000949886001 ອອກຊື່ນາງ ບຸນທັນ ມີເງິນຈຳນວນ 124,483.08 ກີບ; 2) ບັນຊີເລກທີ 052120100949886001 ອອກຊື່ນາງ ບຸນທັນ ມີເງິນຈຳນວນ 898.90 ໂດລາ; 3) ບັນຊີເລກທີ 052120200949886001 ອອກຊື່ນາງ ບຸນທັນ ມີເງິນຈຳນວນ 11,485.78 ບາດ; 4) ບັນຊີເລກທີ 052660000949886001 ອອກຊື່ນາງ ບຸນທັນ ມີເງິນຈຳນວນ 100,000,000.00 ກີບ; 5) ບັນຊີເລກທີ 057120000949886001 ອອກຊື່ນາງ ບຸນທັນ ມີເງິນຈຳນວນ 112,740.82 ກີບ. ຫ້າມບໍ່ໃຫ້ນາງ ບຸນທັນ (ຈຳເລີຍ) ຊື້-ຂາຍ, ມອບ-ໂອນ, ຍົກຊັບ, ມອບຊັບ, ຊວດຈຳ, ປຸກສ້າງ ແລະ ຖອນເງິນຕາມບັນຊີເລກທີດັ່ງກ່າວ ຈົນກວ່າຈະມີຄຳສັ່ງຂອງສານໃຫ້ປ່ຽນແປງ ຫຼື ລົບລ້າງ.

ເຫັນໃບຮັບການຈອງຂໍອຸທອນ ສະບັບເລກທີ 015/ຈສ.ພ, ລົງວັນທີ 18 ສິງຫາ 2016 ຂອງນາງ ບຸນທັນ (ຈຳເລີຍ).

ເຫັນຄຳຮ້ອງຂໍອຸທອນ ສະບັບລົງວັນທີ 22 ສິງຫາ 2016 ຂອງນາງ ບຸນທັນ (ຈຳເລີຍ) ທີ່ໄດ້ຍື່ນຂາເຂົ້າເລກທີ 157, ລົງວັນທີ 23 ສິງຫາ 2016 ຂອງສານປະຊາຊົນແຂວງຫຼວງພະບາງ ໂດຍອ້າງເຫດຜົນວ່າ: ຂໍສະເໜີໃຫ້ສານປະຊາຊົນພາກເໜືອຈົ່ງພິຈາລະນາຄືນກ່ຽວກັບຄຳວິນິດໄສ ຂອງສານປະຊາຊົນແຂວງຫຼວງພະບາງ ອອກຄຳສັ່ງອາຍັດຊັບທີ່ດິນ ແລະ ເຮືອນ ພ້ອມດ້ວຍບັນຊີເງິນຝາກຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ສາຂາແຂວງຫຼວງພະບາງ ທັງໝົດ 5 ບັນຊີນັ້ນ ຖືກຕ້ອງສອດຄ່ອງຕາມລະບຽບກົດໝາຍແລ້ວບໍ່? ເພາະວ່າຂ້າພະເຈົ້າໄດ້ຂາຍທີ່ດິນໃຫ້ທ້າວ ເພັດຈຳພອນ (ໂຈດ) ຖືກຕ້ອງຕາມກົດໝາຍແລ້ວ ແລະ ເອກະພາບກັນທັງສອງຝ່າຍ, ສະນັ້ນ ຂ້າພະເຈົ້າຂໍສະເໜີໃຫ້ສານຂັ້ນອຸທອນ ລົບລ້າງຄຳສັ່ງອາຍັດຊັບຂອງສານປະຊາຊົນແຂວງຫຼວງພະບາງ ແລະ ບັນຊີເງິນຝາກທະນາຄານການຄ້າ ຈຳນວນ 1 ບັນຊີຄື: ບັນຊີເລກທີ 057120000949886001 ອອກຊື່ນາງ ບຸນທັນ ເພື່ອໃຫ້ຂ້າພະເຈົ້ານຳມາໃຊ້ຈ່າຍລ້ຽງຊີບປະຈຳວັນ.

ເຫັນຄຳຕົກລົງບໍ່ຄັດຄ້ານ ສະບັບເລກທີ 330/ອຍກ.ພໜ, ລົງວັນທີ 14 ຕຸລາ 2016 ຂອງຫົວໜ້າອົງການໄອຍະການປະຊາຊົນພາກເໜືອ ໄດ້ຊີ້ແຈງບອກວ່າ: ຄຳຮ້ອງຂໍອຸທອນຂອງນາງ ບຸນທັນ (ຈຳເລີຍ) ບໍ່ມີເຫດຜົນພຽງພໍທາງດ້ານກົດໝາຍ; ເຫັນວ່າ ຄະນະສານແພ່ງຂັ້ນຕົ້ນຂອງສານປະຊາຊົນແຂວງຫຼວງພະບາງ ໄດ້ອອກຄຳສັ່ງອາ

ຍຶດຊັບ ສະບັບເລກທີ 008/ຂຕ.ພ, ລົງວັນທີ 10 ສິງຫາ 2016 ເປັນການອອກຄຳສັ່ງທີ່ຖືກຕ້ອງຕາມເຫດການຕົວຈິງຂອງຄະດີ ແລະ ສອດຄ່ອງຕາມກົດໝາຍແລ້ວ.

## ວິນິດໄສ

ຜ່ານການຄົ້ນຄວ້າບັນດາເອກະສານ, ຂໍ້ມູນ ແລະ ຫຼັກຖານຕ່າງໆ ທີ່ມີຢູ່ໃນສຳນວນຄຳສັ່ງອາຍັດຊັບຢ່າງລະອຽດຖີ່ຖ້ວນແລ້ວ.

ເຫັນວ່າ ຄຳຮ້ອງຂໍອຸທອນຄຳສັ່ງອາຍັດຊັບ ສະບັບລົງວັນທີ 22 ສິງຫາ 2016 ຂອງນາງ ບຸນທັນ (ຈຳເລີຍ) ໄດ້ປະຕິບັດຖືກຕ້ອງຕາມກຳນົດເວລາຂອງການຂໍອຸທອນ ທີ່ໄດ້ກຳນົດໄວ້ໃນມາດຕາ 262 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012 ແລ້ວ. ດັ່ງນັ້ນ, ສານຂັ້ນອຸທອນຈຶ່ງຮັບມາພິຈາລະນາ.

ເຫັນວ່າ ການທີ່ນາງບຸນທັນ (ຈຳເລີຍ) ບໍ່ພໍໃຈຕໍ່ກັບຄຳສັ່ງອາຍັດຊັບຂອງສານປະຊາຊົນແຂວງຫຼວງພະບາງ ຈຶ່ງໄດ້ຂຽນຄຳຮ້ອງຂໍອຸທອນມາຍັງສານປະຊາຊົນພາກເໜືອ ໂດຍອ້າງເຫດຜົນວ່າ: ຂໍສະເໜີໃຫ້ສານປະຊາຊົນພາກເໜືອຈົ່ງພິຈາລະນາຄືນກ່ຽວກັບຄຳວິນິດໄສ ຂອງສານປະຊາຊົນແຂວງຫຼວງພະບາງ ອອກຄຳສັ່ງອາຍັດຊັບທີ່ດິນ ແລະ ເຮືອນ ພ້ອມດ້ວຍບັນຊີເງິນຝາກຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ສາຂາແຂວງຫຼວງພະບາງ ທັງໝົດ 5 ບັນຊີນັ້ນ ຖືກຕ້ອງສອດຄ່ອງຕາມລະບຽບກົດໝາຍແລ້ວບໍ່? ເພາະວ່າຂ້າພະເຈົ້າໄດ້ຂາຍທີ່ດິນໃຫ້ທ້າວເພັດຈຳພອນ (ໂຈດ) ຖືກຕ້ອງຕາມກົດໝາຍແລ້ວ ແລະ ເອກະພາບກັນທັງສອງຝ່າຍ, ສະນັ້ນ ຂ້າພະເຈົ້າຂໍສະເໜີໃຫ້ສານຂັ້ນອຸທອນ ລົບລ້າງຄຳສັ່ງອາຍັດຊັບຂອງສານປະຊາຊົນແຂວງຫຼວງພະບາງ ແລະ ບັນຊີເງິນຝາກທະນາຄານການຄ້າ ຈຳນວນ 1 ບັນຊີຄື: ບັນຊີເລກທີ 0571200000949886001 ອອກຊື່ນາງ ບຸນທັນ ເພື່ອໃຫ້ຂ້າພະເຈົ້ານຳມາໃຊ້ຈ່າຍລ້ຽງຊີບປະຈຳວັນ. ເມື່ອຄະນະສານແພ່ງຂັ້ນອຸທອນຂອງສານປະຊາຊົນພາກເໜືອ ພິຈາລະນາແລ້ວ ເຫັນວ່າ ຄຳຮ້ອງຂໍອຸທອນຂອງນາງ ບຸນທັນ (ຈຳເລີຍ) ບໍ່ມີເຫດຜົນພຽງພໍທາງດ້ານກົດໝາຍ ເນື່ອງຈາກວ່າ ຕາມເນື້ອໃນຄຳຮ້ອງຟ້ອງ ສະບັບລົງວັນທີ 20 ພະຈິກ 2015 ຂອງທ້າວ ເພັດຈຳພອນ (ໂຈດ) ອ້າງວ່າ: ໃນເບື້ອງຕົ້ນນາງ ບຸນທັນ (ຈຳເລີຍ) ໄດ້ມາສະເໜີຂາຍທີ່ດິນຢູ່ບ້ານສັງຄະໂລກ ຈຳນວນ ສອງຕອນ, ຈາກນັ້ນຕົນ ແລະ ທ້າວ ແສງວິງຈິດ ຍາງວິໄລ ຈຶ່ງໄດ້ຕົກລົງຊື້ທີ່ດິນນຳນາງ ບຸນທັນ (ຈຳເລີຍ) ຈຳນວນ ສອງຕອນ ຄື: ຕອນທີໜຶ່ງ ມີເນື້ອທີ່ 263 ຕາແມັດ ຕາມໃບຕາດິນ ສະບັບເລກທີ 217, ລົງວັນທີ 12 ກັນຍາ 2003 ອອກຊື່ນາງ ບຸນທັນ (ຈຳເລີຍ) ແລະ ຕອນທີສອງ ມີເນື້ອທີ່ 1 ເຮັກຕາ 5,868 ຕາແມັດ ຕາມໃບຕາດິນ ສະບັບເລກທີ 223, ລົງວັນທີ 12 ກັນຍາ 2003 ອອກຊື່ນາງ ບຸນທັນ (ຈຳເລີຍ) ໃນມູນຄ່າ 9,600,000 ບາດ ຕາມສັນຍາຊື້-ຂາຍທີ່ດິນ ສະບັບເລກທີ 01/ສຄລ, ລົງວັນທີ 8 ມັງກອນ 2012 ພາຍຫຼັງທີ່ໄດ້ຈ່າຍເງິນໃຫ້ໝົດ ທ້າວ ເພັດຈຳພອນ ຂຸນດາລາ + ທ້າວ ແສງວິງຈິດ ຍາງວິໄລ ກໍໄດ້ເຂົ້າໄປທຳການບຸກເບີກເອົາດິນມາຖົມ ແລະ ປັບໜ້າດິນໃຫ້ພຽງຈຳນວນໜຶ່ງ ແລະ ກໍໄດ້ສະເໜີໃຫ້ພະນັກງານທີ່ດິນ ລົງໄປວັດແທກຂອບເຂດແດນຂອງດິນ ຈຶ່ງຮູ້ວ່າເນື້ອທີ່ດິນຕອນທີສອງ ຕາມໃບຕາດິນເລກທີ 223, ລົງວັນທີ 12 ກັນຍາ 2003 ມີເນື້ອທີ່ຕົວຈິງພຽງແຕ່ 5,868 ຕາແມັດ ເທົ່ານັ້ນ ຕາມໃບຢັ້ງຢືນ ສະບັບເລກທີ 246/ຫຊສ.ຫຼບ, ລົງວັນທີ 11 ເມສາ 2015 ຂອງຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຫຼວງພະບາງ ຊຶ່ງເປັນຂໍ້ມູນຫຼັກຖານພຽງພໍທາງດ້ານກົດໝາຍ ແລະ ສານປະຊາຊົນແຂວງຫຼວງພະບາງ ກໍໄດ້ອອກຄຳສັ່ງອາຍັດຊັບ ສະບັບເລກທີ 008/ຂຕ.ພ, ລົງວັນທີ 10 ສິງຫາ 2016 ເປັນການນຳໃຊ້ມາດຕະການຮັບປະກັນການຮ້ອງຟ້ອງ ທີ່ຖືກຕ້ອງຕາມມາດຕາ 123 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012 ທີ່ໄດ້ລະບຸໄວ້ວ່າ: "ໃນກໍລະນີທີ່ໄດ້ຮູ້ແຈ້ງກ່ຽວກັບປະເພດ, ຈຳນວນ, ບັນຊີສັງຫາລິມະຊັບ ຫຼື ອະສັງຫາລິມະຊັບທີ່ພົວພັນກັບຄະດີ, ເປັນປະໂຫຍດໃຫ້ແກ່ການດຳເນີນຄະດີ ຫຼື ເພື່ອຮັບປະກັນການຮ້ອງຟ້ອງ ຫຼື ການຟ້ອງແຍ່ງ ຕາມຄຳຮ້ອງຂໍຂອງຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຫຼື ຕາມຄຳເຫັນຂອງສານ ຖ້າຫາກແມ່ນຜົນປະໂຫຍດຂອງລັດ ຫຼື ຂອງສັງຄົມແລ້ວ ສານຈະອອກຄຳສັ່ງອາຍັດຊັບ" ດັ່ງນັ້ນ, ສານຂັ້ນອຸທອນຈຶ່ງບໍ່ພິຈາລະນາໃຫ້ໄດ້.

ເຫັນວ່າ ຄຳຕົກລົງບໍ່ຄັດຄ້ານ ສະບັບເລກທີ 330/ອຍກ.ພໜ, ລົງວັນທີ 14 ຕຸລາ 2016 ຂອງຫົວໜ້າອົງການໄອຍະການປະຊາຊົນພາກເໜືອ ເປັນຄຳຕົກລົງບໍ່ຄັດຄ້ານທີ່ມີເຫດຜົນພຽງພໍທາງດ້ານກົດໝາຍ.

ຈາກເຫດຜົນທີ່ໄດ້ວິນິດໄສມາຂ້າງເທິງນັ້ນ ເຫັນວ່າ ຄຳສັ່ງອາຍັດຊັບ ສະບັບເລກທີ 008/ຂຕ.ພ, ລົງວັນທີ 10 ສິງຫາ 2016 ຂອງສານປະຊາຊົນແຂວງຫຼວງພະບາງ ເປັນຄຳສັ່ງອາຍັດຊັບທີ່ຖືກຕ້ອງສອດຄ່ອງກັບກົດໝາຍແລ້ວ ໂດຍອີງຕາມມາດຕາ 278 ຂໍ້ ສອງ ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ທີ່ໄດ້ລະບຸໄວ້ວ່າ: "ຍົກເລີກຄຳຮ້ອງຂໍອຸທອນ ຫຼື ຄຳສະເໜີຄັດຄ້ານ ແລ້ວພິພາກສາຢັ້ງຢືນເອົາຕາມ ຄຳຕັດສິນຂອງສານຂັ້ນຕົ້ນທັງໝົດ" ດັ່ງນັ້ນ, ຄະນະສານແພ່ງຂັ້ນອຸທອນຂອງສານປະຊາຊົນພາກເໜືອ ຈຶ່ງຍົກເລີກຄຳຮ້ອງຂໍອຸທອນຄຳສັ່ງອາຍັດຊັບຂອງນາງ ບຸນທັນ (ຈຳເລີຍ) ແລ້ວອອກຄຳສັ່ງອາຍັດຊັບຢັ້ງຢືນເອົາຕາມຄຳສັ່ງອາຍັດຊັບ ສະບັບເລກທີ 008/ຂຕ.ພ, ລົງວັນທີ 10 ສິງຫາ 2016 ຂອງສານປະຊາຊົນແຂວງຫຼວງພະບາງ ທັງໝົດ.

ເຫັນວ່າ ນາງ ບຸນທັນ (ຈຳເລີຍ) ເປັນຜູ້ຂໍອຸທອນ ແລະ ຄຳຮ້ອງຂໍອຸທອນດັ່ງກ່າວບໍ່ມີເຫດຜົນພຽງພໍ ຈຶ່ງເຫັນຄວນໃຫ້ນາງ ບຸນທັນ (ຈຳເລີຍ) ຮັບຜິດຊອບຈ່າຍເງິນອາງສານຢູ່ສານຂັ້ນອຸທອນ ຕາມໃບຕິດຕາມການໃຊ້ຈ່າຍເງິນອາງສານ ສະບັບເລກທີ 26/ສປຊ.ຈ, ລົງວັນທີ 26 ຕຸລາ 2016 ເປັນເງິນທັງໝົດ 150,000 ກີບ ເອົາເອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງປີ 2006 ແລະ ມາດຕາ 158 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012.

ເຫັນວ່າ ນາງ ບຸນທັນ (ຈຳເລີຍ) ເປັນຜູ້ຂໍອຸທອນ ແລະ ຄຳຮ້ອງຂໍອຸທອນບໍ່ມີເຫດຜົນພຽງພໍ ຈຶ່ງເຫັນຄວນໃຫ້ນາງ ບຸນທັນ (ຈຳເລີຍ) ຮັບຜິດຊອບຈ່າຍເງິນຄ່າທຳນຽມສານຢູ່ສານຂັ້ນອຸທອນ ຕາມໃບຄິດໄລ່ເງິນຄ່າທຳນຽມສານ ສະບັບເລກທີ 017/ສປຊ.ຈ, ລົງວັນທີ 26 ຕຸລາ 2016 ເປັນເງິນທັງໝົດ 72,000 ກີບ ຄືນໃຫ້ແກ່ລັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງປີ 2006 ແລະ ມາດຕາ 158 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012.

ເຫັນວ່າ ນາງ ບຸນທັນ (ຈຳເລີຍ) ເປັນຜູ້ຂໍອຸທອນຄຳສັ່ງອາຍັດຊັບ ຈຶ່ງເຫັນຄວນໃຫ້ນາງ ບຸນທັນ (ຈຳເລີຍ) ຈ່າຍເງິນຄ່າຂໍອຸທອນ 10,000 ກີບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ວັກສອງ ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງປີ 2006.

ເຫັນຕາມມາດຕາ 123, 158, 259, 260, 262, 263, 264, 265, 268, 269, 271, 272, 273, 274, 277, 278, 288, 289 ແລະ ມາດຕາ 290 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012;

ເຫັນຕາມມາດຕາ 16, 17, 24 ແລະ ມາດຕາ 26 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງປີ 2006.

## ດ້ວຍເຫດນີ້

ຈຶ່ງໄດ້ອອກຄຳສັ່ງອາຍັດຊັບຄະດີແພ່ງເລື່ອງນີ້ເປັນຂັ້ນອຸທອນ ໂດຍລັບຫຼັງໂຈດ, ທະນາຍຄວາມໂຈດ ແລະ ຈຳເລີຍ.

ຕາມຮູບຄະດີ: ຮັບເອົາຄຳຮ້ອງຂໍອຸທອນຄຳສັ່ງອາຍັດຊັບ ສະບັບລົງວັນທີ 22 ສິງຫາ 2016 ຂອງນາງ ບຸນທັນ (ຈຳເລີຍ) ມາພິຈາລະນາ.

ຕາມເນື້ອຄະດີ: ບອກວ່າ ຄຳຮ້ອງຂໍອຸທອນຄຳສັ່ງອາຍັດຊັບຂອງນາງ ບຸນທັນ (ຈຳເລີຍ) ບໍ່ມີເຫດຜົນພຽງພໍທາງດ້ານກົດໝາຍ.

ອອກຄຳສັ່ງ: ຍົກເລີກຄຳຮ້ອງຂໍອຸທອນ ສະບັບລົງວັນທີ 22 ສິງຫາ 2016 ຂອງນາງ ບຸນທັນ (ຈຳເລີຍ) ແລ້ວອອກຄຳສັ່ງອາຍັດຊັບຢັ້ງຢືນເອົາຕາມຄຳສັ່ງອາຍັດຊັບ ສະບັບເລກທີ 008/ຂຕ.ພ, ລົງວັນທີ 10 ສິງຫາ 2016 ຂອງສານປະຊາຊົນແຂວງຫຼວງພະບາງ ທັງໝົດ.

ໃຫ້ນາງ ບຸນທັນ (ຈຳເລີຍ) ຮັບຜິດຊອບຈ່າຍເງິນວາງສານຢູ່ສານຂັ້ນອຸທອນ 150,000 ກີບ ຄືນໃຫ້ແກ່ລັດ.

ໃຫ້ນາງ ບຸນທັນ (ຈຳເລີຍ) ຮັບຜິດຊອບຈ່າຍເງິນຄ່າທຳນຽມສານຢູ່ສານຂັ້ນອຸທອນ 72,000 ກີບ ຄືນໃຫ້ແກ່ລັດ.

ໃຫ້ນາງ ບຸນທັນ (ຈຳເລີຍ) ຈ່າຍເງິນຄ່າຂໍອຸທອນ 10,000 ກີບ.

ໄດ້ບອກໂຈດ, ທະນາຍຄວາມໂຈດ ແລະ ຈຳເລີຍຊາບແລ້ວ ຖ້າຫາກຝ່າຍໃດບໍ່ພໍໃຈຕໍ່ຄຳສັ່ງອາຍັດຊັບສະບັບນີ້ ມີສິດຂໍລົບລ້າງ ແລະ ຫົວໜ້າອົງການໄອຍະການປະຊາຊົນພາກເໜືອ ມີສິດສະເໜີຄັດຄ້ານໄດ້ ພາຍໃນກຳນົດເວລາ ສິບວັນ ນັບແຕ່ວັນຮັບຊາບຄຳສັ່ງອາຍັດຊັບສະບັບນີ້ເປັນຕົ້ນໄປ.

| **ປະທານຄະນະສານ** | **ຈ່າສານ** |
| --- | --- |
| ສານປະຊາຊົນພາກເໜືອ / ຄະນະສານແພ່ງ | ສານປະຊາຊົນພາກເໜືອ / ຈ່າສານ / ຄະນະສານແພ່ງ |
| ບົວລະວັນ ເທບພະວົງ | ບຸນມາ ຮັກຫຼ້ານາລາວົງ |

ສຳເນົາຖືກຕ້ອງຕາມສະບັບເດີມ

ຫຼວງພະບາງ, ວັນທີ 8 ທັນວາ 2016

ຈ່າສານແພ່ງ

ສານປະຊາຊົນພາກເໜືອ / ຈ່າສານ / ຄະນະສານແພ່ງ

ສິດທະພອນ ສິດທິຜົນ